ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ໜໜໜໜໜ***ໜໜໜໜໜ

ນາຍົກລັດຖະມົນຕີ

ເລກທີ 292 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 21.09.2011

# ດຳລັດ

## ວ່າດ້ວຍການສຶກສາອົບຮົມວຽກງານ ປ້ອງກັນຊາດ-ປ້ອງກັນ ຄວາມສະຫງົບທົ່ວປວງຊົນ

- ອີງຕາມກົດໝາຍວ່າດ້ວຍລັດຖະບານແຫ່ງ ສປປ ລາວ ສະບັບປັບປຸງເລກທີ 03/ສພຊ, ລົງວັນທີ 06 ພຶດສະພາ 2003;
- ອີງຕາມກົດໝາຍວ່າດ້ວຍພັນທະປ້ອງກັນຊາດ ສະບັບ ເລກທີ 02/90, ລົງວັນທີ 8 ມີນາ 1995;
- ອີງຕາມກົດໝາຍວ່າດ້ວຍການສຶກສາ ສະບັບປັບປຸງເລກທີ 04/ສພຊ, ລົງວັນທີ 3 ກໍລະກົດ 2007;
- ອີງຕາມມະຕິຕົກລົງຂອງລັດຖະບານ ສະບັບເລກທີ 05/ລບ, ລົງວັນທີ 9/6/2011 ກ່ຽວກັບຜົນກອງປະຊຸມ ລັດຖະບານ ສະໄໝສາມັນ ປະຈຳເດືອນພຶດສະພາ ຄັ້ງວັນທີ 30-31/5/2011;
- ອີງຕາມໜັງສືສະເໜີຂອງ ລັດຖະມົນຕີວ່າການ ກະຊວງປ້ອງກັນປະເທດ ສະບັບເລກທີ 1641/ກປທ, ລົງວັນທີ 01 ກໍລະກົດ 2011.

## ລັດຖະບານ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1. ຈຸດປະສົງ

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການໃນການຈັດຕັ້ງປະຕິບັດ, ຄຸ້ມຄອງ, ກວດກາ ການສຶກສາອົບຮົມວຽກງານປ້ອງກັນຊາດ - ປ້ອງກັນຄວາມສະຫງົບ, ຄວາມຮັບຜິດຊອບຂອງອົງການຈັດຕັ້ງ, ລະບອບນະໂຍບາຍ, ຍ້ອງຍໍຕໍ່ຜູ້ປະຕິບັດໜ້າທີ່ວຽກງານດັ່ງກ່າວແນໃສ່ສ້າງພົນລະເມືອງລາວໃຫ້ມີຄວາມຮູ້ ແລະ ມີສະຕິຕື່ນຕົວຕໍ່ການສຶກສາອົບຮົມວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ກາຍເປັນຂອງທົ່ວປວງຊົນ, ມີສະຕິລະວັງຕົວຕໍ່ເລ່ຫຼ່ຽມກົນອຸບາຍຂອງກຸ່ມຄົນບໍ່ດີ.

### ມາດຕາ 2. ການສຶກສາອົບຮົມວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບທົ່ວປວງຊົນ

ການສຶກສາອົບຮົມວຽກງານປ້ອງກັນຊາດ - ປ້ອງກັນຄວາມສະຫງົບ ແມ່ນວິຊາຮຽນໜຶ່ງໃນຫຼັກສູດການຮຽນ-ການສອນຂອງບັນດາໂຮງຮຽນ ແລະ ສະຖາບັນການສຶກສາ ທີ່ຂຶ້ນກັບຂະແໜງການສຶກສາທຸກ

ຂັ້ນ, ເປັນວຽກງານໜຶ່ງທີ່ຈຳເປັນ ແລະສຳຄັນສຳລັບພະນັກງານຫຼັກແຫຼ່ງຂອງລັດ ແລະພົນລະເມືອງລາວທຸກຄົນ ຊຶ່ງຕ້ອງໄດ້ຮັບການສຶກສາອົບຮົມວຽກງານດັ່ງກ່າວ.

### ມາດຕາ 3. ຫຼັກການສຶກສາອົບຮົມ

ການສຶກສາອົບຮົມວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ປະຕິບັດຕາມແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ ຕໍ່ການສຶກສາອົບຮົມວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;
2. ເປັນລະບົບ, ເປັນເອກະພາບຮອບດ້ານ ແລະ ໄດ້ຮັບການຈັດຕັ້ງປະຕິບັດດ້ວຍຫຼາຍຮູບການ;
3. ມີເນື້ອໃນສຳຄັນຕົ້ນຕໍ, ແທດເໝາະກັບແຕ່ລະເປົ້າໝາຍ;
4. ການສຶກສາພາກທິດສະດີຕ້ອງໄປຄຽງຄູ່ກັບການພາກປະຕິບັດຕົວຈິງ;
5. ການສຶກສາຢູ່ໃນໂຮງຮຽນ ຕ້ອງສົມທົບກັບການໂຄສະນາດ້ວຍພາຫະນະສື່ມວນຊົນຢູ່ຕາມ ອົງການຈັດຕັ້ງ ແລະໝູ່ມະຫາຊົນ.

### ມາດຕາ 4. ຂອບເຂດການນຳໃຊ້ດຳລັດ

ດຳລັດສະບັບນີ້ ນຳໃຊ້ສຳລັບພະນັກງານຫຼັກແຫຼ່ງ ແລະທົ່ວໄປຢູ່ໃນອົງການຈັດຕັ້ງຂອງລັດຂັ້ນສູນກາງ ແລະທ້ອງຖິ່ນ, ນັກຮຽນສາຍສາມັນ, ນັກສຶກສາ, ອາຊີວະສຶກສາ ເລີ່ມແຕ່ຊັ້ນມັດທະຍົມຕອນປາຍ, ວິທະຍາໄລ, ມະຫາວິທະຍາໄລ, ພະນັກງານ ແລະ ທົ່ວໄປ ໃນຂອບເຂດທົ່ວປະເທດ.

## ໝວດທີ 2
## ເປົ້າໝາຍສຶກສາອົບຮົມວຽກງານ ປກຊ-ປກສ

### ມາດຕາ 5. ເປົ້າໝາຍສຶກສາອົບຮົມ

ເປົ້າໝາຍສຶກສາອົບຮົມວຽກງານ ປກຊ-ປກສ ປະກອບດ້ວຍ:

1. ພະນັກງານຫຼັກແຫຼ່ງ ແລະທົ່ວໄປ ແຕ່ຂັ້ນສູນກາງຮອດທ້ອງຖິ່ນ;
2. ນັກຮຽນ, ນັກສຶກສາ ແຕ່ຊັ້ນມັດທະຍົມຕອນປາຍຂຶ້ນໄປ ນັບທັງພາກລັດ ແລະ ເອກະຊົນ.

### ມາດຕາ 6. ພະນັກງານຫຼັກແຫຼ່ງ ແລະທົ່ວໄປ

ພະນັກງານຫຼັກແຫຼ່ງ ມີສີ່ເປົ້າໝາຍ ດັ່ງນີ້:

<u>ເປົ້າໝາຍທີ່ໜຶ່ງ</u>:

- ລັດຖະມົນຕີວ່າການ ແລະລັດຖະມົນຕີຊ່ວຍວ່າການ, ຫົວໜ້າ ແລະຮອງຫົວໜ້າອົງການທຽບເທົ່າກະຊວງ, ຫົວໜ້າກົມ;
- ຫົວໜ້າ ແລະຮອງຫົວໜ້າ ຫ້ອງວ່າການສູນກາງພັກ;
- ຫົວໜ້າ ແລະຮອງຫົວໜ້າ ຄະນະຈັດຕັ້ງສູນກາງພັກ;
- ຫົວໜ້າ ແລະ ຮອງຫົວໜ້າ ໂຄສະນາ-ອົບຮົມສູນກາງພັກ;

- ຫົວໜ້າ ແລະຮອງຫົວໜ້າ ຫ້ອງວ່າການສະພາແຫ່ງຊາດ, ປະທານ ແລະຮອງປະທານກຳມາທິການ ຂອງສະພາແຫ່ງຊາດ;

- ຫົວໜ້າ ແລະຮອງຫົວໜ້າ ຫ້ອງວ່າການສຳນັກງານປະທານປະເທດ;
- ຫົວໜ້າ ແລະຮອງຫົວໜ້າ ສະຖາບັນການເມືອງ-ການປົກຄອງແຫ່ງຊາດ;
- ປະທານ ແລະຮອງປະທານ ສູນກາງແນວລາວສ້າງຊາດ;
- ເລຂາ ແລະຮອງເລຂາຄະນະບໍລິຫານງານສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ;
- ປະທານ ແລະຮອງປະທານສະຫະພັນກຳມະບານລາວ;
- ປະທານ ແລະຮອງປະທານສູນກາງສະຫະພັນແມ່ຍິງລາວ;
- ປະທານ ແລະຮອງປະທານ ສານປະຊາຊົນສູງສຸດ;
- ຫົວໜ້າ ແລະຮອງຫົວໜ້າ ອົງການໄອຍະການປະຊາຊົນສູງສຸດ;
- ເຈົ້າເມືອງ;
- ອະທິການບໍດີ, ຮອງອະທິການບໍດີ ແລະ ຄະນະບໍດີ ມະຫາວິທະຍາໄລແຫ່ງຊາດ.

<u>ເປົ້າໝາຍທີ່ສອງ</u>:

- ປະທານ ແລະຮອງປະທານ ແນວລາວສ້າງຊາດ ແຂວງ, ນະຄອນ;
- ເລຂາ ແລະຮອງເລຂາຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ແຂວງ, ນະຄອນ;
- ປະທານ ແລະຮອງປະທານສະຫະພັນກຳມະບານລາວ ແຂວງ, ນະຄອນ;
- ປະທານ ແລະຮອງປະທານສູນກາງສະຫະພັນແມ່ຍິງລາວ ແຂວງ, ນະຄອນ;
- ປະທານ ແລະຮອງປະທານ ສານປະຊາຊົນພາກ, ແຂວງ, ນະຄອນ;
- ຫົວໜ້າ ແລະຮອງຫົວໜ້າ ອົງການໄອຍະການປະຊາຊົນພາກ, ແຂວງ, ນະຄອນ;
- ຮອງຫົວໜ້າກົມຂອງບັນດາກະຊວງ;
- ຫົວໜ້າ ແລະ ຮອງຫົວໜ້າ ວາລະສານພັກ, ອາລຸນໃໝ່;
- ຫົວໜ້າພະແນກການ ແລະທຽບເທົ່າ ຂັ້ນແຂວງ;
- ຫົວໜ້າພະແນກ ຂັ້ນກະຊວງ;
- ຜູ້ອຳນວຍການວິທະຍາໄລ ແລະສະຖາບັນການສຶກສາຊັ້ນສູງ;
- ຄະນະອຳນວຍການໂຮງຮຽນການເມືອງ-ການປົກຄອງແຂວງ, ນະຄອນ.

<u>ເປົ້າໝາຍທີ່ສາມ</u>:

- ປະທານ ແລະຮອງປະທານ ແນວລາວສ້າງຊາດ, ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ, ສະຫະພັນກຳມະບານລາວ ແລະສະຫະພັນແມ່ຍິງລາວ ເມືອງ ແລະເທດສະບານ;
- ຮອງເຈົ້າເມືອງ;
- ຮອງຫົວໜ້າພະແນກການ ແລະທຽບເທົ່າຂັ້ນແຂວງ;
- ຮອງຫົວໜ້າພະແນກຂັ້ນກະຊວງ;
- ຮອງອຳນວຍການ, ຫົວໜ້າພາກວິຊາ ວິທະຍາໄລ, ມະຫາວິທະຍາໄລ;
- ອຳນວຍການ ແລະຮອງອຳນວຍການໂຮງຮຽນທຸກຂັ້ນ, ທຸກສາຍ ທັງພາກລັດ ແລະເອກະຊົນ;
- ຫົວໜ້າ ແລະຮອງຫົວໜ້າຫ້ອງການ, ຂະແໜງການສາຍຕັ້ງຂັ້ນເມືອງ.

ເປົ້າໝາຍທີສີ່:

- ຫົວໜ້າ ແລະຮອງຫົວໜ້າຂະແໜງການຂັ້ນແຂວງ;
- ຫົວໜ້າ ແລະຮອງຫົວໜ້າໜ່ວຍງານຂັ້ນເມືອງ;
- ນາຍບ້ານ, ຮອງນາຍບ້ານ ແລະຫົວໜ້າໜ່ວຍງານຂອງບ້ານ.

ນອກຈາກ ສີ່ເປົ້າໝາຍທີ່ກ່າວມາຂ້າງເທິງນັ້ນ ຍັງມີ:

- ປະທານ ແລະຮອງປະທານສະພາຄຸ້ມຄອງບໍລິຫານຂອງວິສາຫະກິດ;
- ຫົວໜ້າ ແລະຮອງຫົວໜ້າຂອງບັນດາກຸ່ມເສດຖະກິດ;
- ອຳນວຍການ ແລະຮອງອຳນວຍການບັນດາໂຮງງານ;
- ພະນັກງານທົ່ວໄປຂອງບັນດາກະຊວງ, ພະແນກການ ແລະຂະແໜງການຂັ້ນສູນກາງ ແລະທ້ອງຖິ່ນ, ຫົວໜ້າໜ່ວຍງານ, ຜູ້ອອກແຮງງານຂອງບັນດາໂຮງງານ ແລະວິສາຫະກິດຂອງລັດ ແລະເອກະຊົນ, ກຸ່ມເສດຖະກິດ, ຜູ້ສຸຂະພາບແຂງແຮງ, ບໍ່ເປັນກອງຫຼອນ, ປກສ, ຊາວໜຸ່ມ ຢູ່ໃນກະສຽນປະຕິບັດພັນທະປ້ອງກັນຊາດ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍທີ່ກ່ຽວຂ້ອງ.

## ມາດຕາ 7. ນັກຮຽນ, ນັກສຶກສາ

ນັກຮຽນສາຍສາມັນສຶກສາ, ນັກສຶກສາອາຊີວະສຶກສາ, ວິທະຍາໄລ ທີ່ຂຶ້ນກັບຄວາມຮັບຜິດ ຊອບຂອງກະຊວງ, ອົງການທຽບເທົ່າກະຊວງ, ສະຖາບັນສ້າງຄູ, ມະຫາວິທະຍາໄລ ທັງພາກລັດ ແລະເອກະຊົນ, ນັກຮຽນວິທະຍາຄານ, ສະຖາບັນຕ່າງໆ ແລະ ສະຖາບັນການເມືອງ - ການປົກຄອງແຫ່ງຊາດ.

## ມາດຕາ 8. ຜູ້ທີ່ໄດ້ຮັບການຫຼຸດການສຶກສາອົບຮົມວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ

ຜູ້ທີ່ໄດ້ຮັບການຫຼຸດການສຶກສາອົບຮົມວຽກງານ ປກຊ - ປກສ ມີດັ່ງນີ້:

1. ຜູ້ທີ່ເສຍອົງຄະບໍ່ສາມາດເຄື່ອນໄຫວໄດ້ເຕັມສ່ວນ ທີ່ມີໃບຢັ້ງຢືນຈາກຄະນະແພດ;
2. ຜູ້ທີ່ໄດ້ຮຽນ ຊຶ່ງມີໃບຢັ້ງຢືນຜ່ານການກໍ່ສ້າງ ຫຼືບຳລຸງມາແລ້ວ.

## ມາດຕາ 9 . ຜູ້ທີ່ໄດ້ຮັບການຍົກເວັ້ນການສຶກສາອົບຮົມວຽກງານ ປກຊ-ປກສ

ຜູ້ທີ່ໄດ້ຮັບການຍົກເວັ້ນການສຶກສາອົບຮົມວຽກງານ ປກຊ - ປກສ ມີດັ່ງນີ້:

1. ພະນັກງານ, ລັດຖະກອນ ແຕ່ລະຂັ້ນ ທີ່ໄດ້ຮຽນວິຊາສຶກສາ ປກຊ - ປກສ ຕາມໂຄງການຊຶ່ງມີໃບຢັ້ງຢືນໄດ້ຜ່ານການຮຽນແລ້ວ;

2. ນັກຮຽນ, ກຳລັງຮຽນຢູ່ບັນດາໂຮງຮຽນຂອງຕ່າງປະເທດ, ໂຮງຮຽນນັກທຸລະກິດ, ຮ່ວມມືກັບຕ່າງປະເທດຢູ່ລາວ;

3. ນັກຮຽນ, ນັກສຶກສາເພດຍິງ ທີ່ກຳລັງຖືພາ ຫຼື ມີລູກນ້ອຍ.

## ໝວດທີ 3
## ເນື້ອໃນ, ກຳນົດເວລາ ແລະ ສະຖານທີ່ ສຶກສາອົບຮົມວຽກງານ ປກຊ-ປກສ

### ມາດຕາ 10. ເນື້ອໃນສຶກສາອົບຮົມ

ເນື້ອໃນສຶກສາອົບຮົມວຽກງານ ປກຊ-ປກສ ແມ່ນບັນດາເອກະສານແນວທາງການທະຫານຂອງພັກ, ນະໂຍບາຍຂອງລັດ, ຫຼັກສູດ ແລະ ປຶ້ມຄູ່ມືການຮຽນ-ການສອນ ຂອງແຕ່ລະຊັ້ນຮຽນ.

### ມາດຕາ 11. ກຳນົດເວລາສຶກສາອົບຮົມວຽກງານ ປກຊ - ປກສ

ສຳລັບພະນັກງານຫຼັກແຫຼ່ງ ແລະທົ່ວໄປ ແຕ່ຊັ້ນສູນກາງຮອດທ້ອງຖິ່ນໃຫ້ປະຕິບັດ ດັ່ງນີ້:

- ເປົ້າໝາຍທີ່ໜຶ່ງ: 360 ຊົ່ວໂມງ.
- ເປົ້າໝາຍທີ່ສອງ: 240 ຊົ່ວໂມງ.
- ເປົ້າໝາຍທີ່ສາມ: 160 ຊົ່ວໂມງ.
- ເປົ້າໝາຍທີ່ສີ່: 160 ຊົ່ວໂມງ.

ສຳລັບນັກຮຽນ, ນັກສຶກສາ ນັບແຕ່ຊັ້ນມັດທະຍົມຕອນປາຍຂຶ້ນໄປ ທັງພາກລັດ ແລະ ເອກະຊົນ ໃຫ້ປະຕິບັດ ດັ່ງນີ້:

- ຊັ້ນ ມໍ 5 : 40 ຊົ່ວໂມງ.
- ຊັ້ນ ມໍ 6 : 47 ຊົ່ວໂມງ.
- ຊັ້ນ ມໍ 7 : 33 ຊົ່ວໂມງ.
- ຊັ້ນສູງ : 135 ຊົ່ວໂມງ.
- ຊັ້ນມະຫາວິທະຍາໄລ: 165 ຊົ່ວໂມງ.
- ຊັ້ນປະລິຍາຕີ ບໍລິຫານ-ການເມືອງ: 60 ຊົ່ວໂມງ.
- ໂຮງຮຽນການເມືອງ-ການປົກຄອງແຂວງ, ນະຄອນ: 64 ຊົ່ວໂມງ.
- ສະຖາບັນການເມືອງ-ການປົກຄອງແຫ່ງຊາດ: 72 ຊົ່ວໂມງ.

### ມາດຕາ 12. ສະຖານທີ່ສຶກສາອົບຮົມວຽກງານ ປກຊ - ປກສ

ສະຖານທີ່ສຶກສາອົບຮົມວຽກງານ ປກຊ - ປກສ ສຳລັບສີ່ເປົ້າໝາຍ ມີດັ່ງນີ້:

1. ເປົ້າໝາຍທີ່ໜຶ່ງ, ສອງ ອົບຮົມຢູ່ວິທະຍາຄານປ້ອງກັນຊາດ ໄກສອນພົມວິຫານ;
2. ເປົ້າໝາຍທີ່ສາມ, ສີ່ ອົບຮົມຢູ່ໂຮງຮຽນການທະຫານທ້ອງຖິ່ນ, ໂຮງຮຽນ ປກສ ຊັ້ນກາງ, ຊັ້ນຕົ້ນ ແຂວງ, ນະຄອນ.

### ມາດຕາ 13. ການອອກ ແລະມອບໃບຢັ້ງຢືນ

ການອອກ ແລະມອບໃບຢັ້ງຢືນໃຫ້ບັນດາເປົ້າໝາຍທີ່ໄດ້ສຳເລັດການສຶກສາອົບຮົມ ວຽກງານ ປກຊ - ປກສ ມີດັ່ງນີ້:

1. ອຳນວຍການວິທະຍາຄານປ້ອງກັນຊາດໄກສອນພົມວິຫານ, ວິທະຍາຄານປ້ອງກັນຊາດແຫ່ງຊາດ;
2. ອຳນວຍການໂຮງຮຽນການທະຫານທ້ອງຖິ່ນ, ໂຮງຮຽນ ປກສ ຊັ້ນກາງ, ຊັ້ນຕົ້ນແຂວງ, ນະຄອນ.

### ມາດຕາ 14. ການປະກອບພະນັກງານຄຸ້ມຄອງ, ນັກວິທະຍາກອນ ແລະ ຄູສອນ

ການປະກອບພະນັກງານຄຸ້ມຄອງ, ນັກວິທະຍາກອນ ແລະຄູສອນ ການສຶກສາອົບຮົມວຽກງານ ປກຊ-ປກສ ໃຫ້ປະຕິບັດ ດັ່ງນີ້:

1. ກະຊວງສຶກສາທິການ ແລະ ກິລາ, ກະຊວງແຮງງານສະຫວັດດີການ ແລະ ສັງຄົມ ຕ້ອງຈັດຕັ້ງພະນັກງານຄຸ້ມຄອງ, ນັກວິທະຍາກອນ ແລະຄູສອນ ວິຊາສຶກສາອົບຮົມວຽກງານ ປກຊ - ປກສ, ສ່ວນບັນດາກະຊວງ, ອົງການທຽບເທົ່າກະຊວງ ແລະອົງການຈັດຕັ້ງຕ່າງໆ, ພະແນກການ, ຂະແໜງການຂັ້ນຕ່າງໆ, ສະຖາບັນການເມືອງ ແລະການປົກຄອງແຫ່ງຊາດ, ໂຮງຮຽນການເມືອງ-ການປົກຄອງແຂວງ ແລະບັນດາສະຖາບັນການສຶກສາ ໃຫ້ອີງໃສ່ຄວາມຮຽກຮ້ອງຕ້ອງການຂອງໜ້າທີ່, ສະພາບຄວາມເປັນຈິງໃນການປະກອບພະນັກງານຮັບຜິດຊອບສະເພາະ ຫຼື ຄວບໜ້າທີ່ຊ່ວຍການນໍາ ປະຕິບັດໜ້າທີ່ສຶກສາອົບຮົມວຽກງານ ປກຊ - ປກສ;

2. ບັນດາໂຮງຮຽນມັດທະຍົມຕອນປາຍ, ໂຮງຮຽນວິຊາຊີບ, ວິຊາສະເພາະຊັ້ນກາງຂອງລັດຕ້ອງໄດ້ຈັດຕັ້ງ ແລະປະກອບຈຸຄູສອນ ຮັບຜິດຊອບສະເພາະ ຫຼື ຄວບໜ້າທີ່. ບັນດາໂຮງຮຽນເອກະຊົນ ແລະບັນດາສູນອົບຮົມ ຕ້ອງຊັບຊ້ອນພະນັກງານຮັບຜິດຊອບ ສະເພາະສິດສອນວຽກງານ ປກຊ-ປກສ.

3. ກະຊວງສຶກສາທິການ, ປ້ອງກັນປະເທດ, ປ້ອງກັນຄວາມສະຫງົບ, ແຮງງານສະຫວັດດີການ ແລະສັງຄົມ ຕ້ອງຈັດຕັ້ງ, ສັບຊ້ອນພະນັກງານ ແລະແຕ່ງຕັ້ງເອົານາຍທະຫານໄປສົມທົບກັບຄູສອນເພື່ອຄຸ້ມຄອງ ແລະ ຮັບຜິດຊອບການສຶກສາອົບຮົມວຽກງານ ປກຊ - ປກສ.

## ໝວດທີ 4
## ອົງການຮັບຜິດຊອບການສຶກສາອົບຮົມວຽກງານ ປກຊ-ປກສ

### ມາດຕາ15. ອົງການຮັບຜິດຊອບການສຶກສາອົບຮົມວຽກງານ ປກຊ-ປກສ

ອົງການຮັບຜິດຊອບການສຶກສາອົບຮົມວຽກງານ ປກຊ-ປກສ ປະກອບດ້ວຍ:

1. ກະຊວງປ້ອງກັນປະເທດ;
2. ກະຊວງປ້ອງກັນຄວາມສະຫງົບ.

### ມາດຕາ 16. ຄວາມຮັບຜິດຊອບຂອງກະຊວງປ້ອງກັນປະເທດ

ໃນການສຶກສາອົບຮົມວຽກງານ ປກຊ-ປກສ ກະຊວງປ້ອງກັນປະເທດ ມີໜ້າທີ່ຮັບຜິດຊອບ ດັ່ງນີ້:

1. ເປັນເຈົ້າການເອກະພາບກັບກະຊວງປ້ອງກັນຄວາມສະຫງົບ ສົມທົບກັບກະຊວງສຶກສາທິການ ແລະ ກິລາ ແລະພາກສ່ວນທີ່ກ່ຽວຂ້ອງ ສະເໜີລັດຖະບານຮັບຮອງ ຫຼືປະກາດໃຊ້ ບັນດາເອກະສານທີ່ພົວພັນເຖິງວຽກງານ ປກຊ-ປກສ ຕາມລະບຽບກົດໝາຍ;

2. ຊີ້ນໍາບັນດາວິທະຍາຄານ ປກຊ ສ້າງ ແລະຈັດຕັ້ງປະຕິບັດແຜນການ, ກະກຽມຄູສອນ, ຊ່ວຍສະຖາບັນການເມືອງ - ການປົກຄອງແຫ່ງຊາດ ແລະໂຮງຮຽນການເມືອງ - ການປົກຄອງແຂວງ ສິດສອນວິຊາສຶກສາ ປກຊ-ປກສ ໃຫ້ບັນດາເປົ້າໝາຍ ທີ່ໄດ້ກໍານົດໄວ້ໃນດໍາລັດສະບັບນີ້;

3. ສົມທົບກັບກະຊວງປ້ອງກັນຄວາມສະຫງົບ, ກະຊວງພາຍໃນ, ກະຊວງສຶກສາທິການ ແລະ ກິລາ, ຄະນະຈັດຕັ້ງສູນກາງ, ປະທານອົງການພຸດທະສາສະໜາສຳພັນລາວ, ສ້າງໂຄງການບຳລຸງຄວາມຮູ້ດ້ານການສຶກສາອົບຮົມວຽກງານ ປກຊ - ປກສ, ກຳນົດໂຄງການສຶກສາໃຫ້ບັນດາອົງການຈັດຕັ້ງຂັ້ນສູນກາງໃຫ້ແທດເໝາະກັບແຕ່ລະເປົ້າໝາຍ;

4. ຊີ້ນຳບັນດາວິທະຍາຄານ, ໂຮງຮຽນກອງທັບ, ຮ່ວມມືກັບບັນດາມະຫາວິທະຍາໄລ ປະຕິບັດໜ້າທີ່ກໍ່ສ້າງ, ບຳລຸງພະນັກງານຄຸ້ມຄອງ, ນັກວິທະຍາກອນ, ຄູສອນວຽກງານປ້ອງກັນຊາດ ໃຫ້ບັນດາໂຮງຮຽນຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້;

5. ປະສານສົມທົບກັບຄະນະຈັດຕັ້ງສູນກາງ, ກະຊວງພາຍໃນ, ກະຊວງປ້ອງກັນຄວາມສະຫງົບ ຄັດເລືອກເອົາພະນັກງານເປົ້າໝາຍທີ່ໜຶ່ງ ແລະທີ່ສອງ ໄປສຶກສາອົບຮົມວຽກງານ ປກຊ - ປກສ;

6. ຊີ້ນຳສະພາສຶກສາ ປກຊ-ປກສ ແຂວງ, ນະຄອນ ຈັດຕັ້ງປະຕິບັດໜ້າທີ່ສຶກສາອົບຮົມວຽກງານ ປກຊ - ປກສ;

7. ສົມທົບກັບກະຊວງສຶກສາທິການ ແລະ ກິລາ, ບັນດາອົງການທີ່ກ່ຽວຂ້ອງ ເພື່ອສ້າງຕັ້ງ ແລະ ປັບປຸງສະຖາບັນສຶກສາອົບຮົມວຽກງານ ປກຊ - ປກສ, ສະໂມສອນກິລາ, ເຕັກນິກປ້ອງກັນຊາດ, ໂຮງຮຽນການທະຫານທ້ອງຖິ່ນທີ່ຂຶ້ນກັບ ກະຊວງປ້ອງກັນປະເທດ, ຊີ້ນຳບັນດາສະຖາບັນໃຫ້ເຄື່ອນໄຫວຖືກຕ້ອງຕາມກົດໝາຍສຶກສາ, ຕົກລົງກ່ຽວກັບໂຄງປະກອບການຈັດຕັ້ງ, ບຸກຄະລາກອນ, ບົດບາດ, ໜ້າທີ່ຂອງຫ້ອງການປະຈຳການຂອງສະພາສຶກສາ ປກຊ-ປກສ;

8. ສົມທົບກັບກະຊວງປ້ອງກັນຄວາມສະຫງົບ, ບັນດາກະຊວງ ແລະ ອົງການທີ່ກ່ຽວຂ້ອງ ຈັດຕັ້ງການກວດການ, ກວດກາ, ສະຫຼຸບ, ສັງລວມ ການສຶກສາອົບຮົມວຽກງານ ປກຊ - ປກສ ຢູ່ບັນດາອົງການຈັດຕັ້ງຂັ້ນສູນກາງ ແລະທ້ອງຖິ່ນ ແຕ່ລະໄຕມາດ, ແຕ່ລະປີ ເພື່ອລາຍງານໃຫ້ຂັ້ນເທິງຂອງຕົນ.

## ມາດຕາ 17. ຄວາມຮັບຜິດຊອບຂອງກະຊວງປ້ອງກັນຄວາມສະຫງົບ

ການສຶກສາອົບຮົມວຽກງານ ປກຊ-ປກສ ກະຊວງປ້ອງກັນຄວາມສະຫງົບມີໜ້າທີ່ຮັບຜິດຊອບ ດັ່ງນີ້:

1. ສົມທົບກັບກະຊວງປ້ອງກັນປະເທດ ປະຕິບັດເນື້ອໃນ ທີ່ໄດ້ກຳນົດໄວ້ໃນຂໍ້ 2 ແລະ 3 ມາດຕາ 16 ຂອງດຳລັດສະບັບນີ້;

2. ຊີ້ນຳບັນດາວິທະຍາຄານ, ໂຮງຮຽນ ແລະ ກົມກອງທີ່ຂຶ້ນກັບ, ສົມທົບກັບຄະນະພັກ, ອົງການປົກຄອງທ້ອງຖິ່ນ, ບັນດາອົງການຄຸ້ມຄອງການສຶກສາ, ສະຖາບັນການສຶກສາ ປກຊ-ປກສ ກະກຽມຄູສອນ, ນັກວິທະຍາກອນ ເພື່ອສິດສອນວຽກງານ ປກຊ-ປກສ ໃຫ້ບັນດາເປົ້າໝາຍຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້;

3. ຊີ້ນຳບັນດາວິທະຍາຄານ, ໂຮງຮຽນ ປກສ ແລະປະສານສົມທົບກັບກະຊວງປ້ອງກັນປະເທດ, ກະຊວງສຶກສາທິການ ແລະ ກິລາ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ, ບັນດາວິທະຍາຄານ, ປະຕິບັດໜ້າທີ່ກໍ່ສ້າງ, ບຳລຸງ, ຝຶກອົບຮົມຄູ ໃນການສຶກສາອົບຮົມວຽກງານປ້ອງກັນ ຊາດ - ປ້ອງກັນຄວາມສະຫງົບ;

4. ກຳນົດເນື້ອໃນສຶກສາອົບຮົມທີ່ກ່ຽວຂ້ອງກັບວຽກງານ ປກສ ໃຫ້ບັນດາເປົ້າໝາຍຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້.

## ມາດຕາ 18. ຄວາມຮັບຜິດຊອບຂອງອົງການຈັດຕັ້ງອື່ນ

ບັນດາອົງການຈັດຕັ້ງອື່ນ ທີ່ບໍ່ໄດ້ລະບຸໄວ້ໃນໝວດ 4 ຂອງດຳລັດສະບັບນີ້ ມີໜ້າທີ່ປະສານສົມທົບ ແລະເຂົ້າຮ່ວມການຈັດຕັ້ງປະຕິບັດດຳລັດສະບັບນີ້ ຕາມພາລະບົດບາດ, ຂອບເຂດສິດ ແລະ ໜ້າທີ່ຂອງຕົນ.

# ໝວດທີ 5
# ອົງການຄຸ້ມຄອງການສຶກສາອົບຮົມວຽກງານ ປກຊ-ປກສ

## ມາດຕາ 19. ໂຄງປະກອບການຈັດຕັ້ງຂອງສະພາສຶກສາອົບຮົມວຽກງານ ປກຊ-ປກສ

ເພື່ອຮັບປະກັນການຊີ້ນຳ, ຄຸ້ມຄອງການສຶກສາອົບຮົມວຽກງານ ປກຊ-ປກສ ລັດຖະບານ ອະນຸຍາດໃຫ້ສ້າງຕັ້ງສະພາສຶກສາ ປກຊ-ປກສ ຊຶ່ງປະກອບດ້ວຍ:

1. ສະພາສຶກສາ ປກຊ - ປກສ ຂັ້ນສູນກາງ;
2. ສະພາສຶກສາ ປກຊ - ປກສ ຂັ້ນແຂວງ, ນະຄອນ;
3. ສະພາສຶກສາ ປກຊ - ປກສ ຂັ້ນເມືອງ.

ໃຫ້ສະພາສຶກສາ ປກຊ - ປກສ ແຕ່ລະຂັ້ນ ສ້າງຕັ້ງຫ້ອງການຂອງຕົນຂຶ້ນປະຈຳຢູ່ກະຊວງປ້ອງກັນປະເທດ, ກອງບັນຊາການທະຫານແຂວງ, ເມືອງ ພ້ອມທັງປະກອບບຸກຄະລາກອນເພື່ອຊ່ວຍວຽກຈຳນວນໜຶ່ງຕາມຄວາມເໝາະສົມ.

ສະພາສຶກສາ ປກຊ - ປກສ ນັບແຕ່ຂັ້ນສູນກາງຮອດທ້ອງຖິ່ນ ເຮັດວຽກຕາມລະບອບຄວບໜ້າທີ່.

ບັນດາກະຊວງ, ອົງການທຽບເທົ່າກະຊວງ, ອົງການຈັດຕັ້ງຕ່າງໆ ທັງພາກລັດ ແລະເອກະຊົນຕ້ອງຈັດຕັ້ງຄະນະຮັບຜິດຊອບການສຶກສາອົບຮົມວຽກງານ ປກຊ - ປກສ ພາຍໃຕ້ການຊີ້ນຳຂອງສະພາສຶກສາແຕ່ລະຂັ້ນ.

## ມາດຕາ 20. ໂຄງປະກອບຂອງຄະນະສະພາສຶກສາ ປກຊ - ປກສ ຂັ້ນສູນກາງ

ສະພາສຶກສາ ປກຊ-ປກສ ຂັ້ນສູນກາງ ສ້າງຕັ້ງຂຶ້ນໂດຍນາຍົກລັດຖະມົນຕີ ຊຶ່ງປະກອບດ້ວຍ:

- ທ່ານ ຮອງນາຍົກລັດຖະມົນຕີ ລັດຖະມົນຕີວ່າການກະຊວງປ້ອງກັນປະເທດ ເປັນປະທານ;
- ທ່ານ ລັດຖະມົນຕີວ່າການ ກະຊວງປ້ອງກັນຄວາມສະຫງົບ ເປັນຮອງປະທານ;
- ທ່ານ ລັດຖະມົນຕີວ່າການກະຊວງສຶກສາທິການ ແລະ ກິລາ ເປັນຮອງປະທານ;
- ທ່ານ ລັດຖະມົນຕີຊ່ວຍວ່າການກະຊວງ ຫຼື ຮອງຫົວໜ້າອົງການທຽບເທົ່າກະຊວງທີ່ກ່ຽວຂ້ອງ ເປັນຮອງປະທານ;
- ຮອງປະທານ ສູນກາງແນວລາວສ້າງຊາດ, ຮອງປະທານ ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ ເປັນກຳມະການ.

## ມາດຕາ 21. ສິດ ແລະໜ້າທີ່ຂອງສະພາສຶກສາ ປກຊ-ປກສ ຂັ້ນສູນກາງ

ສະພາສຶກສາ ປກຊ-ປກສ ຂັ້ນສູນກາງ ມີພາລະບົດບາດ ເປັນເສນາທິການໃຫ້ລັດຖະບານດ້ານວຽກງານສຶກສາ ປກຊ-ປກສ ຊຶ່ງມີສິດ ແລະໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ແລະ ນຳສະເໜີແນວທາງນະໂຍບາຍ, ແຜນການ, ແຜນງານ, ລະບຽບການ ກ່ຽວກັບການສຶກສາອົບຮົມວຽກງານ ປກຊ-ປກສ ໃຫ້ລັດຖະບານ ພິຈາລະນາ;

2. ຈັດຕັ້ງເຜີຍແຜ່, ແນະນຳປະຕິບັດແນວທາງນະໂຍບາຍ, ແຜນການ, ແຜນງານ, ລະບຽບການ, ກົດໝາຍກ່ຽວກັບການສຶກສາອົບຮົມວຽກງານ ປກຊ-ປກສ;

3. ສ້າງໂຄງການ, ຫຼັກສູດ, ກຳນົດເນື້ອໃນລາຍການ ການຮຽນ-ການສອນ ແລະນະໂຍບາຍຕ່າງໆ ຕໍ່ຄູ ແລະ ຜູ້ທີ່ພວມສຶກສາອົບຮົມວຽກງານ ປກຊ-ປກສ;

4. ຊີ້ນຳນຳພາ, ຊຸກຍູ້ບັນດາກະຊວງ, ອົງການທຽບເທົ່າກະຊວງ, ສູນກາງແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ, ອົງການປົກຄອງທ້ອງຖິ່ນ ແລະ ສະພາສຶກສາ ປກຊ-ປກສ ຂັ້ນແຂວງ ຈັດຕັ້ງປະຕິບັດການສຶກສາອົບຮົມວຽກງານ ປກຊ-ປກສ;

5. ອອກຂໍ້ຕົກລົງສ້າງຕັ້ງສະພາສຶກສາ ປກຊ-ປກສ ຂັ້ນແຂວງ;

6. ສົມທົບກັບບັນດາອົງການທີ່ກ່ຽວຂ້ອງ ຕິດຕາມ, ກວດກາ, ແກ້ໄຂບັນຫາ ແລະຖອດຖອນບົດຮຽນ ຜ່ານການຈັດຕັ້ງປະຕິບັດການສຶກສາອົບຮົມວຽກງານ ປກຊ-ປກສ;

7. ສົມທົບກັບອົງການຈັດຕັ້ງການເມືອງ-ສັງຄົມ ໂຄສະນາຂົນຂວາຍມະຫາຊົນ ເຂົ້າຮ່ວມຈັດຕັ້ງປະຕິບັດໜ້າທີ່ສຶກສາອົບຮົມວຽກງານ ປກຊ-ປກສ;

8. ລາຍງານສະພາບການ ແລະ ສະໜອງຂໍ້ມູນກ່ຽວກັບບັນຫາທີ່ພົວພັນເຖິງການຈັດຕັ້ງປະຕິບັດໜ້າທີ່ສຶກສາອົບຮົມວຽກງານ ປກຊ-ປກສ ເພື່ອສັງລວມລາຍງານຕໍ່ລັດຖະບານ;

9. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມການມອບໝາຍຂອງລັດຖະບານ ແລະຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

## ມາດຕາ 22. ໂຄງປະກອບຄະນະຂອງສະພາສຶກສາ ປກຊ-ປກສ ຂັ້ນແຂວງ

ສະພາສຶກສາ ປກຊ-ປກສ ຂັ້ນແຂວງ ສ້າງຕັ້ງຂຶ້ນໂດຍປະທານສະພາສຶກສາ ປກຊ-ປກສ ຂັ້ນສູນກາງ ຊຶ່ງປະກອບດ້ວຍ:

- ທ່ານ ເຈົ້າແຂວງ, ເຈົ້າຄອງນະຄອນ ຫຼືຮອງເຈົ້າແຂວງ, ຮອງເຈົ້າຄອງນະຄອນ ເປັນປະທານ;
- ທ່ານ ຫົວໜ້າກອງບັນຊາການທະຫານ, ຫົວໜ້າກອງບັນຊາການ ປກສ , ຫົວໜ້າພະແນກສຶກສາແຂວງ, ນະຄອນ ເປັນຮອງປະທານ;
- ທ່ານ ຫົວໜ້າພະແນກການ, ຫົວໜ້າທຽບເທົ່າພະແນກການ ທີ່ກ່ຽວຂ້ອງ ແຂວງ, ນະຄອນ ເປັນກຳມະການ;
- ທ່ານ ປະທານແນວລາວສ້າງຊາດ, ຫົວໜ້າອົງການຈັດຕັ້ງມະຫາຊົນ ແຂວງ, ນະຄອນ ເປັນກຳມະການ.

## ມາດຕາ 23. ສິດ ແລະໜ້າທີ່ຂອງສະພາສຶກສາ ປກຊ-ປກສ ຂັ້ນແຂວງ

ສະພາສຶກສາ ປກຊ-ປກສ ຂັ້ນແຂວງ ເປັນເສນາທິການໃຫ້ອົງການປົກຄອງແຂວງ, ນະຄອນດ້ານວຽກງານສຶກສາ ປກຊ-ປກສ ຊຶ່ງມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເຜີຍແຜ່ ແລະຈັດຕັ້ງປະຕິບັດແນວທາງນະໂຍບາຍ, ແຜນການ, ແຜນງານ, ລະບຽບກົດໝາຍ, ໂຄງການ, ຫຼັກສູດ, ເນື້ອໃນລາຍການ ການຮຽນ-ການສອນ ແລະ ນະໂຍບາຍຕ່າງໆ ກ່ຽວກັບການສຶກສາອົບຮົມວຽກງານ ປກຊ-ປກສ;

2. ຊີ້ນຳນຳພາ, ຊຸກຍູ້ ບັນດາພະແນກການ ແລະທຽບເທົ່າ, ອົງການແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ສະຫະພັນນັກຮົບເກົ່າ ຂັ້ນແຂວງ, ອົງການປົກຄອງທ້ອງຖິ່ນ ແລະສະພາສຶກສາ ປກຊ-ປກສ ຂັ້ນເມືອງ ຈັດຕັ້ງປະຕິບັດການສຶກສາອົບຮົມວຽກງານ ປກຊ-ປກສ;

3. ອອກຂໍ້ຕົກລົງສ້າງຕັ້ງສະພາສຶກສາ ປກຊ-ປກສ ຂັ້ນເມືອງ;

4. ສົມທົບກັບບັນດາພາກສ່ວນທີ່ກ່ຽວຂ້ອງ ຕິດຕາມ, ກວດກາ, ແກ້ໄຂບັນຫາ ແລະຖອດຖອນບົດຮຽນຜ່ານການຈັດຕັ້ງປະຕິບັດການສຶກສາອົບຮົມວຽກງານ ປກຊ- ປກສ;

5. ສົມທົບກັບອົງການຈັດຕັ້ງການເມືອງ-ສັງຄົມ ໂຄສະນາຊົນຂວາຍມະຫາຊົນ ເຂົ້າຮ່ວມຈັດຕັ້ງປະຕິບັດໜ້າທີ່ສຶກສາອົບຮົມວຽກງານ ປກຊ - ປກສ;

6. ລາຍງານສະພາບການ ແລະສະໜອງຂໍ້ມູນກ່ຽວກັບບັນຫາທີ່ພົວພັນເຖິງການຈັດຕັ້ງ ປະຕິບັດໜ້າທີ່ສຶກສາອົບຮົມວຽກງານ ປກຊ - ປກສ ເພື່ອສັງລວມລາຍງານຕໍ່ສະພາສຶກສາ ປກຊ-ປກສ ຂັ້ນສູກາງ;

7. ປະຕິບັດສິດ ແລະໜ້າທີ່ອື່ນໆ ຕາມການມອບໝາຍຂອງສະພາສຶກສາ ປກຊ - ປກສ ຂັ້ນສູນກາງ ແລະຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

## ມາດຕາ 24. ໂຄງປະກອບບຸກຄະລາກອນຂອງສະພາສຶກສາ ປກຊ-ປກສ ຂັ້ນເມືອງ

ສະພາສຶກສາ ປກຊ-ປກສ ຂັ້ນເມືອງ ສ້າງຕັ້ງຂຶ້ນໂດຍປະທານສະພາສຶກສາ ປກຊ - ປກສ ຂັ້ນແຂວງ ຊຶ່ງປະກອບດ້ວຍ:

- ທ່ານ ເຈົ້າເມືອງ, ຫົວໜ້າ ເທດສະບານ ຫຼືຮອງເຈົ້າເມືອງ, ຮອງຫົວໜ້າ ເທດສະບານ ເປັນປະທານ;
- ທ່ານ ຫົວໜ້າກອງບັນຊາການທະຫານ, ຫົວໜ້າກອງບັນຊາການ ປກສ, ຫົວໜ້າຫ້ອງການສຶກສາ ເມືອງ, ເທດສະບານ ເປັນຮອງປະທານ;
- ທ່ານ ຫົວໜ້າ ຫ້ອງການ, ຫົວໜ້າ ໜ່ວຍງານ ທີ່ກ່ຽວຂ້ອງ ຂັ້ນເມືອງ ເປັນກຳມະການ;
- ທ່ານ ປະທານແນວລາວສ້າງຊາດ, ຫົວໜ້າ ອົງການຈັດຕັ້ງມະຫາຊົນ ແລະ ຫົວໜ້າສະຫະພັນນັກຮົບເກົ່າ ຂັ້ນເມືອງ ເປັນກຳມະການ.

## ມາດຕາ 25. ສິດ ແລະໜ້າທີ່ຂອງສະພາສຶກສາ ປກຊ-ປກສ ຂັ້ນເມືອງ

ສະພາສຶກສາ ປກຊ-ປກສ ຂັ້ນເມືອງ ເປັນເສນາທິການໃຫ້ອົງການປົກຄອງເມືອງ, ເທດສະບານ ດ້ານວຽກງານສຶກສາ ປກຊ-ປກສ ຊຶ່ງມີສິດ ແລະໜ້າທີ່ ດັ່ງນີ້:

1. ຈັດຕັ້ງປະຕິບັດແນວທາງນະໂຍບາຍ, ແຜນການ, ແຜນງານ, ລະບຽບກົດໝາຍ, ໂຄງການ, ຫຼັກສູດ, ເນື້ອໃນລາຍການ ການຮຽນ-ການສອນ ແລະນະໂຍບາຍຕ່າງໆ ກ່ຽວກັບການສຶກສາອົບຮົມວຽກງານ ປກຊ-ປກສ;

2. ຊີ້ນຳນຳພາ, ຊຸກຍູ້ ບັນດາຫ້ອງການ, ໜ່ວຍງານ, ໂຮງງານ, ວິສາຫະກິດ ທັງພາກລັດ ແລະ ເອກະຊົນ ທີ່ຢູ່ໃນຂອບເຂດເມືອງຂອງຕົນ ຈັດຕັ້ງປະຕິບັດການສຶກສາອົບ ຮົມວຽກງານ ປກຊ-ປກສ;

3. ສົມທົບກັບບັນດາພາກສ່ວນທີ່ກ່ຽວຂ້ອງ ຕິດຕາມ, ກວດກາ, ແກ້ໄຂບັນຫາ ແລະຖອດຖອນ ບົດຮຽນ ຜ່ານການຈັດຕັ້ງປະຕິບັດການສຶກສາອົບຮົມວຽກງານ ປກຊ- ປກສ;

4. ສົມທົບກັບອົງການຈັດຕັ້ງການເມືອງ-ສັງຄົມ ໂຄສະນາຂົນຂວາຍມະຫາຊົນ ເຂົ້າຮ່ວມ ຈັດຕັ້ງປະຕິບັດໜ້າທີ່ສຶກສາອົບຮົມວຽກງານ ປກຊ-ປກສ;

5. ລາຍງານສະພາບການ ແລະສະໜອງຂໍ້ມູນກ່ຽວກັບບັນຫາທີ່ພົວພັນເຖິງການຈັດຕັ້ງ ປະຕິບັດ ໜ້າທີ່ສຶກສາອົບຮົມວຽກງານ ປກຊ - ປກສ ເພື່ອສັງລວມລາຍງານຕໍ່ສະພາສຶກສາ ປກຊ-ປກສ ຂັ້ນແຂວງ.

6. ປະຕິບັດສິດ ແລະໜ້າທີ່ອື່ນໆ ຕາມການມອບໝາຍຂອງສະພາສຶກສາ ປກຊ- ປກສ ຂັ້ນແຂວງ ແລະຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

## ໝວດທີ 6
## ງົບປະມານ

### ມາດຕາ 26. ງົບປະມານ

ການສຶກສາອົບຮົມວຽກງານ ປກຊ-ປກສ ແມ່ນໃຫ້ນຳໃຊ້ງົບປະມານຂອງລັດ ແລະ ການປະກອບ ສ່ວນຂອງສັງຄົມ.

### ມາດຕາ 27. ເປົ້າໝາຍການນຳໃຊ້ງົບປະມານ

ເປົ້າໝາຍການນຳໃຊ້ງົບປະມານ ມີດັ່ງນີ້:

1. ນຳໃຊ້ເຂົ້າໃນການເຄື່ອນໄຫວຂອງສະພາສຶກສາ ປກຊ-ປກສ ແຕ່ລະຂັ້ນ;
2. ນຳໃຊ້ເຂົ້າໃນການສຶກສາອົບຮົມວຽກງານ ປກຊ - ປກສ.

## ໝວດທີ 7
## ການປະຕິບັດນະໂຍບາຍ ແລະມາດຕະການຕໍ່ຜູ້ລະເມີດ

### ມາດຕາ 28. ການປະຕິບັດນະໂຍບາຍ

ພະນັກງານຄຸ້ມຄອງ, ວິທະຍາກອນ ແລະຄູສອນ ວິຊາສຶກສາ ປກຊ - ປກສ ຈະໄດ້ຮັບນະໂຍບາຍ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການຂອງລັດ ດັ່ງນີ້:

1. ວິທະຍາກອນ ທີ່ຖືກເຊີນ, ຄູສອນປະຈຳ ຈະໄດ້ຮັບນະໂຍບາຍເງິນຊົ່ວໂມງສອນ ຕາມລະບຽບ ການທີ່ກະຊວງການເງິນກຳນົດ;

2. ຄູສອນປະຈຳວິຊາສຶກສາ ປກຊ - ປກສ ທີ່ບໍ່ແມ່ນທະຫານ, ຕຳຫຼວດ ຈະໄດ້ຮັບເຄື່ອງນຸ່ງຊຸດສະໜາມປີລະ 1 ຊຸດ, ໂດຍແມ່ນອົງການທີ່ກ່ຽວຂ້ອງເປັນຜູ້ກຳນົດເບີກຈ່າຍ;

3. ຄູ ແລະນັກຮຽນ ເວລາຝຶກແອບຮ່ຳຮຽນວິຊາສຶກສາ ປກຊ-ປກສ ຖ້າຖືກບາດເຈັບ ຈະໄດ້ຮັບນະໂຍບາຍໃນການປິ່ນປົວຕາມຄວາມເປັນຈິງ;

4. ບຸກຄົນ ຫລືການຈັດຕັ້ງໃດ ຫາກມີຜົນງານດີເດັ່ນ ໃນການສຶກສາອົບຮົມວຽກງານ ປກຊ - ປກສ ຈະໄດ້ຮັບການຍ້ອງຍໍ ແລະນະໂຍບາຍອື່ນໆ ຕາມຄວາມເໝາະສົມ.

### ມາດຕາ 29. ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ ຫລືການຈັດຕັ້ງໃດ ຫາກລະເມີດດຳລັດສະບັບນີ້ ຈະຖືກປະຕິບັດວິໄນ ຫຼືລົງໂທດຕາມລະບຽບກົດໝາຍ ແລ້ວແຕ່ກໍລະນີເບົາ ຫລືໜັກ.

## ໝວດທີ 8
## ບົດບັນຍັດສຸດທ້າຍ

### ມາດຕາ 30. ການຈັດຕັ້ງປະຕິບັດ

ມອບໃຫ້ກະຊວງປ້ອງກັນປະເທດ, ກະຊວງປ້ອງກັນຄວາມສະຫງົບ, ກະຊວງສຶກສາທິການ ແລະກິລາ, ກະຊວງພາຍໃນ ປະສານສົມທົບຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ມີປະສິດທິຜົນ.

ບັນດາກະຊວງ, ອົງການທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນທຸກຂັ້ນຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

### ມາດຕາ 31. ຜົນສັກສິດ

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ. ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບດຳລັດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ນາຍົກລັດຖະມົນຕີ

